ສໍານັກງານ ຄລຕ
ເລກທີ...171...
ວັນທີ...15/12/10
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---===000===---

ທະນາຄານແຫ່ງ ສປປ ລາວ
ກົມບັນຊີ-ການເງິນ

ເລກທີ207/ກບຊ
ນະຄອນຫຼວງວຽງຈັນ, ວັນທີ 15 DEC 2010

# ບົດແນະນໍາ
## ການບັນຊີທະນາຄານທຸລະກິດ ແລະ ສະຖາບັນການເງິນ ກ່ຽວກັບທຸລະກໍາດ້ານຫຼັກຊັບ

- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມບັນຊີ-ການເງິນ ສະບັບເລກທີ 04/ທຫລ, ລົງວັນທີ 25.03.2005
- ອີງຕາມຂໍ້ຕົກລົງຂອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ວ່າດ້ວຍການຮັບຮອງແຜນຜັງການບັນຊີ ແລະ ແບບຟອມໃບລາຍງານການເງິນສໍາລັບ ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຂຶ້ນກັບທະນາຄານແຫ່ງ ສປປ ລາວ ສະບັບເລກທີ 672/ທຫລ, ລົງວັນທີ 02.09.2008.
- ອີງຕາມການສະເໜີຂອງທະນາຄານການຄ້າຕ່າງປະເທດລາວ ສະບັບເລກທີ, 542/ທຄຕລ, ລົງວັນທີ 26.09.2010 ກ່ຽວກັບການບັນທຶກບັນຊີການຫັນເປັນຮຸ້ນສ່ວນຂອງທະນາຄານການຄ້າຕ່າງປະເທດລາວ.

ເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການອັນຈໍາເປັນ ແລະ ຮີບດ່ວນຂອງທະນາຄານທຸລະກິດໃນການເຄື່ອນໄຫວວຽກງານດ້ານບັນຊີສໍາລັບທຸລະກໍາທີ່ພົວພັນກັບຫຼັກຊັບ ໂດຍສະເພາະແມ່ນການອອກຮຸ້ນຂາຍໃຫ້ມວນຊົນ ແລະ ການບໍລິການດ້ານເງິນຝາກໃຫ້ແກ່ລູກຄ້າປະເພດບໍລິສັດຫຼັກຊັບ, ກົມບັນຊີ-ການເງິນ, ທະນາຄານແຫ່ງ ສປປ ລາວ ອອກບົດແນະນໍາ:

1). ເພີ່ມເລກໝາຍບັນຊີເຂົ້າໃນສາລະບານບັນຊີທະນາຄານທຸລະກິດ ແລະ ສະຖາບັນການເງິນ ໂດຍໃຫ້ຈັດເຂົ້າໃນປະເພດ ແລະ ໝວດບັນຊີທີ່ກ່ຽວຂ້ອງ.

2). ບັນທຶກບັນຊີກ່ຽວກັບການອອກຮຸ້ນຂາຍໃຫ້ມວນຊົນ ໂດຍໃຫ້ເລືອກປະຕິບັດຕາມແຕ່ລະກໍລະນີ

ທີ່ມີການເຄື່ອນໄຫວຕົວຈິງ ຊຶ່ງມີລາຍລະອຽດດັ່ງຕໍ່ໄປນີ້:

## I. ເພີ່ມເລກໝາຍບັນຊີເຂົ້າໃນສາລະບານບັນຊີ

### I.1. ເລກໝາຍບັນຊີໃນໃບສະຫຼຸບຊັບສິນບັດ

21313 ເງິນຮັບຝາກຈາກບໍລິສັດຫຼັກຊັບ

213131 ເງິນຮັບຝາກຈາກບໍລິສັດຫຼັກຊັບພາຍໃນປະເທດ

2131311 ເງິນຝາກກະແສລາຍວັນ

2131313 ເງິນຝາກປະຢັດ

2131314 ເງິນຝາກປະຈຳວັນ

2131315 ເງິນຝາກມີກຳນົດ

213132 ເງິນຮັບຝາກຈາກບໍລິສັດຫຼັກຊັບຕ່າງປະເທດ

2131321 ເງິນຝາກກະແສລາຍວັນ

2131323 ເງິນຝາກປະຢັດ

2131324 ເງິນຝາກປະຈຳວັນ

2131325 ເງິນຝາກມີກຳນົດ

213713 ດອກເບ້ຍຄ້າງຈ່າຍເງິນຝາກຂອງບໍລິສັດຫຼັກຊັບ

2137131 ດອກເບ້ຍຄ້າງຈ່າຍເງິນຝາກຂອງບໍລິສັດຫຼັກຊັບພາຍໃນປະເທດ

2137132 ດອກເບ້ຍຄ້າງຈ່າຍເງິນຝາກຂອງບໍລິສັດຫຼັກຊັບຕ່າງປະເທດ

32012 ສ່ວນຫຼຸດມູນຄ່າຮຸ້ນ, ການປະກອບທຶນ, ການຄວບ ແລະ ການແຍກຕົວວ/ກ

410133 ລາຍຈ່າຍດອກເບ້ຍເງິນຝາກຂອງບໍລິສັດຫຼັກຊັບ

4101331 ລາຍຈ່າຍດອກເບ້ຍເງິນຝາກຂອງບໍລິສັດຫຼັກຊັບພາຍໃນປະເທດ

4101332 ລາຍຈ່າຍດອກເບ້ຍເງິນຝາກຂອງບໍລິສັດຫຼັກຊັບຕ່າງປະເທດ

44031 ຄ່ານາຍໜ້າ

440311 ຄ່ານາຍໜ້າຂາຍຫຼັກຊັບ

440312 ຄ່າທີ່ປຶກສາ

440318 ຄ່ານາຍໜ້າອື່ນໆ

### I.2. ເລກໝາຍບັນຊີນອກໃບສະຫຼຸບຊັບສິນບັດ

9703 ບັນຊີຕິດຕາມຮຸ້ນທີ່ທະນາຄານໄດ້ຈຳໜ່າຍ

97031 ຮຸ້ນສາມັນ

970311 ຮຸ້ນສາມັນຂາຍຜ່ານຕົວແທນ

970312 ຮຸ້ນສາມັນຈອງຊື້

97032 ຮຸ້ນບຸລິມະສິດ

970321 ຮຸ້ນບຸລິມະສິດຂາຍຜ່ານຕົວແທນ

970322 ຮຸ້ນບຸລິມະສິດຈອງຊື້

98703 ບັນຊີຄູ່ຕິດຕາມຮຸ້ນທີ່ທະນາຄານໄດ້ຈຳໜ່າຍ

987031 ບັນຊີຄູ່ຕິດຕາມຮຸ້ນສາມັນທີ່ທະນາຄານໄດ້ຈຳໜ່າຍ

987032 ບັນຊີຄູ່ຕິດຕາມຮຸ້ນບຸລິມາສິດທີ່ທະນາຄານໄດ້ຈຳໜ່າຍ

## II. ການບັນທຶກບັນຊີກ່ຽວກັບການອອກຮຸ້ນຂາຍໃຫ້ມວນຊົນ

### II.1. ເລກໝາຍບັນຊີທີ່ນຳໃຊ້

1.1. ບັນຊີໃນໃບສະຫຼຸບຊັບສິນບັດ

1101100 ເງິນສົດໃນຄັງ

3101000 ທຶນຮຽກໃຫ້ປະກອບ

3102000 ທຶນບໍ່ທັນຮຽກໃຫ້ປະກອບ

3108100 ຜູ້ຖືຮຸ້ນທຶນຈົດທະບຽນບໍ່ທັນຮຽກໃຫ້ປະກອບ

3108200 ຜູ້ຖືຮຸ້ນທຶນຈົດທະບຽນຮຽກໃຫ້ປະກອບແຕ່ຍັງບໍ່ທັນໄດ້ຖອກ

3201100 ສ່ວນເພີ່ມມູນຄ່າຮຸ້ນ

3201200 ສ່ວນຫຼຸດມູນຄ່າຮຸ້ນ

4403110 ຄ່ານາຍໜ້າຂາຍຮຸ້ນ

4403120 ຄ່າທີ່ປຶກສາ

1.2. ບັນຊີນອກໃບສະຫຼຸບຊັບສິນບັດ

9703 ບັນຊີຕິດຕາມຮຸ້ນທີ່ທະນາຄານໄດ້ຈຳໜ່າຍ

97031 ຮຸ້ນສາມັນ

9703110 ຮຸ້ນສາມັນຂາຍຜ່ານຕົວແທນ

9703120 ຮຸ້ນສາມັນຈອງຊື້

97032 ຮຸ້ນບຸລິມະສິດ

9703210 ຮຸ້ນບຸລິມະສິດຂາຍຜ່ານຕົວແທນ

9703220 ຮຸ້ນບຸລິມະສິດຈອງຊື້

98703 ບັນຊີຄູ່ຕິດຕາມຮຸ້ນທີ່ທະນາຄານໄດ້ຈຳໜ່າຍ

II.2. <u>ການບັນທຶກບັນຊີ</u>

II.2.1. <u>ກໍລະນີຂາຍຮຸ້ນດ້ວຍຕົນເອງ</u>

1.<u>ທະນາຄານເປີດຮັບຈອງຊື້ຮຸ້ນ:</u> ກໍລະນີບໍ່ໃຫ້ຜູ້ລົງທຶນວາງເງິນຄ້ຳປະກັນ

1). ເມື່ອຜູ້ລົງທຶນສັ່ງຈອງຊື້ຮຸ້ນ: ທະນາຄານຕິດຕາມຈຳນວນຮຸ້ນ ແລະ ມູນຄ່າຂອງຮຸ້ນ ທີ່ຜູ້ລົງທຶນສັ່ງຈອງຢູ່ນອກໃນສະຫຼຸບຊັບສິນບັດ ໂດຍການບັນທຶກບັນຊີດັ່ງນີ້:

ໜີ້: 00-9703120 ຮຸ້ນສາມັນຈອງຊື້

ມີ: 00-9870312 ບັນຊີຄູ່ຕິດຕາມຮຸ້ນທີ່ທະນາຄານໄດ້ຈຳໜ່າຍ

2). ເມື່ອໄລຍະເວລາການສັ່ງຈອງຊື້ຄົບກຳນົດທະນາຄານແບ່ງປັນຮຸ້ນໃຫ້ຜູ້ສັ່ງຈອງຊື້ ແລະ ບັນທຶກບັນຊີ ດັ່ງນີ້:

ໜີ້: 00-3108100 ຜູ້ຖືຮຸ້ນທຶນຈົດທະບຽນບໍ່ທັນຮຽກໃຫ້ປະກອບ

ມີ: 00-3102000 ທຶນບໍ່ທັນຮຽກໃຫ້ປະກອບ

- ທະນາຄານຮຽກໃຫ້ຜູ້ຈອງຊື້ຮຸ້ນໃຫ້ມາຮັບຮູ້ກຳນົດເວລາການຖອກທຶນ ແລະ ບັນທຶກບັນຊີ

ໜີ້: 00-3108200 ຜູ້ຖືຮຸ້ນທຶນຈົດທະບຽນຮຽກໃຫ້ປະກອບບໍ່ທັນໄດ້ຖອກ

ມີ: 00-3108100 ຜູ້ຖືຮຸ້ນທຶນຈົດທະບຽນບໍ່ທັນຮຽກໃຫ້ປະກອບ

3). ເມື່ອຜູ້ລົງທຶນນຳເງິນມາຖອກຄ່າຊື້ຮຸ້ນ

- ທະນາຄານຕ້ອງຊຳລະບັນຊີຜູ້ຖືຮຸ້ນທຶນຈົດທະບຽນຮຽກໃຫ້ປະກອບບໍ່ທັນໄດ້ຖອກ ແລະ ບັນທຶກບັນຊີດັ່ງນີ້:

ໜີ້: 00-3102000 ທຶນບໍ່ທັນຮຽກໃຫ້ປະກອບ

ມີ: 00-3108200 ຜູ້ຖືຮຸ້ນທຶນຈົດທະບຽນຮຽກໃຫ້ປະກອບບໍ່ທັນໄດ້ຖອກ

- ຖ້າຂາຍໄດ້ໃນລາຄາຕາມມູນຄ່າກຳນົດ ບັນທຶກບັນຊີດັ່ງນີ້:

ໜີ້: 00-11011/xx ເງິນສົດ ຫຼື ບັນຊີອື່ນທີ່ກ່ຽວຂ້ອງ

ມີ: 00-3101000 ທຶນຮຽກໃຫ້ປກອບ

- ຖ້າຂາຍໄດ້ໃນລາຄາສູງກວ່າລາຄາຕາມມູນຄ່າກຳນົດ ບັນທຶກບັນຊີດັ່ງນີ້:

ໜີ້: 00-11011/xx ເງິນສົດ ຫຼື ບັນຊີອື່ນທີ່ກ່ຽວຂ້ອງ

ມີ: 00-3101000 ທຶນຮຽກໃຫ້ປກອບ

ມີ: 00-3201100 ສ່ວນເກີນມູນຄ່າຮຸ້ນ

- ຖ້າຂາຍໄດ້ ໃນລາຄາຕ່ຳກວ່າລາຄາຕາມມູນຄ່າກຳນົດ ບັນທຶກບັນຊີດັ່ງນີ້:

ໜີ້: 00-11011/xx ເງິນສົດ ຫຼື ບັນຊີອື່ນທີ່ກ່ຽວຂ້ອງ

ໜີ້: 00-3201200 ສ່ວນຫຼຸດມູນຄ່າຮຸ້ນ

ມີ: 00-3101000 ທຶນທັນໃຫ້ປະກອບ

2. <u>ທະນາຄານເປີດຮັບຈອງຊື້ຮຸ້ນ:</u> ກໍລະນີໃຫ້ຜູ້ລົງທຶນວາງເງິນຄໍ້າປະກັນ.

1).ເມື່ອຜູ້ລົງທຶນສັ່ງຈອງຊື້ຮຸ້ນ:

ຜູ້ລົງທຶນສັ່ງຈອງຊື້ຮຸ້ນຕ້ອງເອົາເງິນມາມອບໃຫ້ທະນາຄານເພື່ອວາງເງິນຄໍ້າປະກັນໃນການຊື້ຮຸ້ນ ຕາມຈຳນວນທີ່ໄດ້ສັ່ງຈອງຊື້ ແລະ ທະນາຄານບັນທຶກບັນຊີຕາມຈຳນວນເງິນທີ່ໄດ້ຮັບ

ໜີ້: 00-11011/xxx ເງິນສົດ ຫຼື ບັນຊີອື່ນທີ່ກ່ຽວຂ້ອງ

ມີ: 00-2201280 ເງິນວາງຄໍ້າປະກັນອື່ນໆ

- ພ້ອມນັ້ນທະນາຄານຕິດຕາມຈຳນວນຮຸ້ນ ແລະ ມູນຄ່າຂອງຮຸ້ນທີ່ຜູ້ລົງທຶນສັ່ງຈອງ ຢູ່ນອກໃບສະຫຼຸບຊັບສິນບັດ ໂດຍການບັນທຶກບັນຊີດັ່ງນີ້:

ໜີ້: 00-9703120 ຮຸ້ນສາມັນຈອງຊື້

ມີ: 00-9870312 ບັນຊີຄູ່ຕິດຕາມຮຸ້ນທີ່ທະນາຄານໄດ້ຈຳໜ່າຍ

2).ເມື່ອໄລຍະເວລາການສັ່ງຈອງຊື້ຄົບກຳນົດທະນາຄານແບ່ງປັນຮຸ້ນໃຫ້ຜູ້ສັ່ງຈອງຊື້ຮຸ້ນແລ້ວແຈ້ງ ໃຫ້ຜູ້ລົງທຶນຮັບຊາບ ແລະ ສະສາງບັນຊີຕິດຕາມຈຳນວນຮຸ້ນທີ່ຜູ້ລົງທຶນສັ່ງຈອງຢູ່ນອກໃບສະຫຼຸບຊັບສິນບັດ ໂດຍບັນທຶກບັນຊີດັ່ງນີ້:

- ສະສາງບັນຊີນອກໃບສະຫຼຸບຊັບສິນບັດ

ໜີ້: 00-9870312 ບັນຊີຄູ່ຕິດຕາມຮຸ້ນທີ່ທະນາຄານໄດ້ຈຳໜ່າຍ

ມີ: 00-9703120 ຮຸ້ນສາມັນຈອງຊື້

2.1). ຈຳນວນຮຸ້ນທີ່ທະນາຄານແບ່ງປັນໃຫ້ເທົ່າກັບຈຳນວນທີ່ສັ່ງຈອງ ບັນທຶກບັນຊີດັ່ງນີ້:

ໜີ້: 00-2201280 ເງິນວາງຄໍ້າປະກັນອື່ນໆ

ມີ: 00-3101000 ທຶນຮຽກໃຫ້ປະກອບ

2.2). ຈຳນວນຮຸ້ນທີ່ທະນາຄານແບ່ງປັນໃຫ້ໜ້ອຍກວ່າຈຳນວນຮຸ້ນສັ່ງຈອງ, ທະນາຄານຈະສົ່ງເງິນ ວາງຄໍ້າປະກັນຄືນໃຫ້ຜູ້ສັ່ງຈອງຊື້ຮຸ້ນ ບັນທຶກບັນຊີດັ່ງນີ້:

ໜີ້: 00-2201280 ເງິນວາງຄໍ້າປະກັນອື່ນໆ

ມີ: 00-3101000 ທຶນຮຽກໃຫ້ປະກອບ

ມີ: 00-11011/xxx ເງິນສົດ ຫຼື ບັນຊີອື່ນທີ່ກ່ຽວຂ້ອງ

2.3). ກໍລະນີວາງເງິນຄໍ້າປະກັນການສັ່ງຈອງຊື້ຮຸ້ນສ່ວນໃດສ່ວນໜຶ່ງ ບັນທຶກບັນຊີດັ່ງນີ້:

ໜີ້: 00-2201280 ເງິນວາງຄໍ້າປະກັນອື່ນໆ

ໜີ້: 00-11011/xx ເງິນສົດ ຫຼື ບັນຊີອື່ນທີ່ກ່ຽວຂ້ອງ

ມີ: 00-3101000 ທຶນຮຽກໃຫ້ປະກອບ

II.2.2. ກໍລະນີຂາຍຜ່ານຕົວແທນ

II.2.2.1. ເມື່ອທະນາຄານສົ່ງຮຸ້ນໃຫ້ຕົວແທນ

ທະນາຄານບັນທຶກບັນຊີຕິດຕາມຈຳນວນຮຸ້ນພ້ອມທັງຈຳນວນເງິນຢູ່ນອກໃບສະຫຼຸບຊັບສິນບັດ ບັນທຶກບັນຊີດັ່ງນີ້:

ໜີ້: 00-9703110 ຮຸ້ນສາມັນຂາຍຜ່ານຕົວແທນ

ມີ: 00-9870311 ບັນຊີຄູ່ຕິດຕາມຮຸ້ນທີ່ທະນາຄານໄດ້ຈຳໜ່າຍ

II.2.2.2. ເມື່ອໄດ້ຮັບເງິນຈາກການຂາຍຮຸ້ນ

1). ຊຳລະບັນຊີນອກໃບສະຫຼຸບຊັບສິນບັດຕາມຈຳນວນຮຸ້ນ ແລະ ຈຳນວນເງິນທີ່ໄດ້ຮັບ

ໜີ້: 00-9870311 ບັນຊີຄູ່ຕິດຕາມຮຸ້ນທີ່ທະນາຄານໄດ້ຈຳໜ່າຍ

ມີ: 00-9703110 ຮຸ້ນສາມັນຂາຍຜ່ານຕົວແທນ

2). ບັນທຶກບັນຊີໃນໃບສະຫຼຸບຊັບສິນບັດ

2.1). ຖ້າຂາຍຮຸ້ນໄດ້ໃນລາຄາຕາມມູນຄ່າກຳນົດ ບັນທຶກບັນຊີດັ່ງນີ້:

ໜີ້: 00-11011/xx ເງິນສົດ ຫຼື ບັນຊີອື່ນທີ່ກ່ຽວຂ້ອງ

ມີ: 00-3101000 ທຶນຮຽກໃຫ້ປະກອບ

2.2). ຖ້າຂາຍຮຸ້ນໄດ້ໃນລາຄາສູງກວ່າມູນຄ່າກຳນົດ ບັນທຶກບັນຊີດັ່ງນີ້:

ໜີ້: 00-11011/xx ເງິນສົດ ຫຼື ບັນຊີອື່ນທີ່ກ່ຽວຂ້ອງ

ມີ: 00-3101000 ທຶນຮຽກໃຫ້ປະກອບ

ມີ: 00-3201100 ສ່ວນເພີ່ມມູນຄ່າຮຸ້ນ

2.3). ຖ້າຂາຍຮຸ້ນໄດ້ໃນລາຄາຕ່ຳກວ່າຕາມມູນຄ່າກຳນົດ ບັນທຶກບັນຊີດັ່ງນີ້:

ໜີ້: 00-11011/xx ເງິນສົດ ຫຼື ບັນຊີອື່ນທີ່ກ່ຽວຂ້ອງ

ໜີ້: 00-3201200 ສ່ວນຫຼຸດມູນຄ່າຮຸ້ນ

ມີ: 00-3101000 ທຶນຮຽກໃຫ້ປະກອບ

3). ເມື່ອຈ່າຍຄ່ານາຍໜ້າ ຫຼື ຄ່າທີ່ປຶກສາໃຫ້ຕົວແທນຂາຍຮຸ້ນ

ໜີ້: 00-4403110 ຄ່ານາຍໜ້າຂາຍຮຸ້ນ

ໜີ້: 00-4403120 ຄ່າທີ່ປຶກສາ

ມີ: 00-11011/xx ເງິນສົດ ຫຼື ບັນຊີອື່ນທີ່ກ່ຽວຂ້ອງ



ນດ

ບົດແນະນຳສະບັບນີ້ ມີຜົນໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ໃນກໍລະນີພົບຄວາມຍຸ້ງຍາກໃນການຈັດຕັ້ງປະຕິບັດ, ໃຫ້ທະນາຄານ ແລະ ສະຖາບັນການເງິນສະເໜີຄຳເຫັນມາຍັງກົມບັນຊີ-ການເງິນ ເພື່ອຄົ້ນຄວ້າແກ້ໄຂ ແລະ ແນະນຳເພີ່ມເຕີມ.

ຮ/ກ ຫົວໜ້າກົມບັນຊີ - ການເງິນ

ທະນາຄານ ແຫ່ງ ສ.ປ.ປ.ລ ກົມບັນຊີ-ການເງິນ

ຂັນແກ້ວ ຫຼ້າມະນີເງິນ

<u>ບ່ອນສົ່ງ:</u>

1. ບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ
2. ສູນ ITCB, ທຫລ
3. ກົມຄຸ້ມຄອງທະນາຄານທຸລະກິດ, ທຫລ
4. ກົມບໍລິການ ທະນາຄານ, ທຫລ
5. ສຳນັກງານ ຄ.ຕ.ລ